ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 022 /ທຄຕລ.ສພຊ.2026
ນະຄອນຫຼວງວຽງຈັນ, ວັນທີ: 13 MAY 2026

# ບົດບັນທຶກ
## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2025
## ວັນທີ 30 ເມສາ 2026

ກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ປະຈຳປີ 2025 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:45 - 17:00 ໂມງ ຂອງວັນພະຫັດ, ວັນທີ 30 ເມສາ 2026 ທີ່ຫ້ອງປະຊຸມ Grand Ballroom ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານກອງປະຊຸມຂອງ **ທ່ານ ນ. ບຸນຕາ ດາຣາວົ**, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ **76** ທ່ານ, ຜູ້ມອບສິດຈຳນວນ **470** ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **1,420,723,090 ຮຸ້ນ**, ນັບທັງ **74,993,690 ຮຸ້ນ** ທີ່ຖືກມອບສິດ, ບັນລຸອັດຕາສ່ວນ **91.964%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ **124,148,910 ຮຸ້ນ** ເທົ່າກັບ **8.036%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

### ຄະນະປະທານໃນກອງປະຊຸມ ປະກອບມີ:

1. ທ່ານ ນ. ບຸນຕາ ດາຣາວົ, ຮອງປະທານສະພາບໍລິຫານ, ກຳມະການອິດສະລະ ເຮັດໜ້າທີ່ເປັນປະທານກອງປະຊຸມ (ຕາມການມອບໝາຍຂອງທ່ານປະທານສະພາບໍລິຫານທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຄັ້ງນີ້ໄດ້);
2. ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ, ກຳມະການສະພາບໍລິຫານ;
3. ທ່ານ ປະສົມເພັດ ຄຳຕັນ, ກຳມະການສະພາບໍລິຫານ;
4. ທ່ານ ມິກາແອລ ເດີ ແກຼກ, ກຳມະການສະພາບໍລິຫານ;
5. ທ່ານ ຣສ. ທອງເພັດ ຈັນທະນີວົງ, ກຳມະການສະພາບໍລິຫານອິດສະລະ;
6. ທ່ານ ນ. ລັດດາວັນ ຊົງວິໄລ, ກຳມະການສະພາບໍລິຫານອິດສະລະ;
7. ທ່ານ ສອນໄຊ ສີລາເພັດ, ກຳມະການສະພາບໍລິຫານອິດສະລະ.

ທ່ານປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມ, ແນະນຳລະບຽບການດຳເນີນກອງປະຊຸມ, ວິທີລົງຄະແນນສຽງ ແລະ ແຈ້ງໃຫ້ກອງປະຊຸມຊາບກ່ຽວກັບການແຈກຢາຍເອກະສານປະກອບການປະຊຸມສະບັບປັບປຸງໃຫ້ຜູ້ຖືຮຸ້ນທຸກທ່ານທີ່ເຂົ້າຮ່ວມກອງປະຊຸມ, ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**ກອງປະຊຸມ ໄດ້ພິຈາລະນາ, ມີຄໍາເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:**

**ວາລະທີ 1: ພິຈາລະນາ ຮັບຮອງ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2025.**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອໍານວຍການ ທຄຕລ ໄດ້ລາຍງານຫຍໍ້ເນື້ອໃນຂອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ປະຈໍາປີ 2025 ທີ່ຈັດຂຶ້ນໃນວັນທີ 05 ກັນຍາ 2025, ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຂໍ້ມູນຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ, ສະເໜີກອງປະຊຸມ ພິຈາລະນາຮັບຮອງເອົາບົດບັນທຶກດັ່ງກ່າວ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄໍາຖາມຕໍ່ວາລະນີ້ ເຊິ່ງມີບາງຄໍາເຫັນ ດັ່ງນີ້:

**ທ່ານ ສອນນາລິນ ແສງມະນີ** ຫົວໜ້າກອງເລຂາກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມວ່າບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2025 ແມ່ນໄດ້ສໍາເລັດການເປີດເຜີຍໃຫ້ຜູ້ຖືຮຸ້ນຮັບຊາບແລ້ວ. ພ້ອມນີ້, ຜ່ານການທົບທວນຈາກຜູ້ຖືຮຸ້ນບາງທ່ານ ໄດ້ ຊ່ວຍແນະນໍາປັບປຸງເນື້ອໃນບາງຄໍາສັບ ໂດຍສະເພາະຄໍາສັບທີ່ເປັນພາສາອັງກິດ ໃຫ້ມີຄວາມຖືກຕ້ອງ, ເໝາະສົມ ແລະ ມີຄວາມສົມບູນຂຶ້ນ. ເຖິງແນວໃດກໍ່ຕາມການປັບປຸງບາງເນື້ອໃນຄໍາສັບດັ່ງກ່າວ ບໍ່ມີຜົນກະທົບຕໍ່ຂໍ້ມູນສໍາຄັນ ແລະ ມະຕິຂອງກອງປະຊຸມແຕ່ຢ່າງໃດ. ດັ່ງນັ້ນ, ທາງກອງເລຂາຈຶ່ງຂໍສະແດງຄວາມຂອບໃຈຕໍ່ການໃຫ້ຄວາມຊ່ວຍເຫຼືອແນະນໍາດັ່ງກ່າວ ແລະ ຂໍລາຍງານໃຫ້ ກອງປະຊຸມໄດ້ຮັບຊາບ.

ເມື່ອບໍ່ມີຄໍາເຫັນໃດໆຕື່ມແລ້ວ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈໍານວນ **1,420,723,090** ສຽງ, ເທົ່າກັບ **100%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈໍານວນ **0** ສຽງ, ເທົ່າກັບ **0%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 02: ຮັບຊາບລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ການເພີ່ມທຶນຈົດທະບຽນຂອງ ທຄຕລ; ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງ ຈໍາກັດ ແລະ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ.**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອໍານວຍການ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມຕໍ່ກັບ ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ຕາມມະຕິທີ່ໄດ້ເຫັນດີຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນປະຈໍາປີ 2024 ກ່ຽວກັບການເພີ່ມທຶນຈົດທະບຽນຂອງ ທຄຕລ, ການຂາຍຮຸ້ນ ທີ່ ທຄຕລ ຖືຄອງຢູ່ ທະນາຄານລາວ-ຝຣັ່ງ ຈໍາກັດ ແລະ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໃນວາລະທີ 8, 9 ແລະ 10 ຕາມລໍາດັບ ເຊິ່ງມີລາຍລະອຽດດັ່ງນີ້:

- **ວຽກງານການເພີ່ມທຶນຈົດທະບຽນຂອງ ທຄຕລ:**
  - ທຄຕລ ໄດ້ສໍາເລັດການຄັດເລືອກ ທີ່ປຶກສາທາງດ້ານການເງິນ (Financial Advisor) ແລະ ຜູ້ຄໍ້າປະກັນການອອກຈໍາໜ່າຍ (Underwriter) ຕາມຂັ້ນຕອນການຈັດຊື້ຈັດຈ້າງ ແລະ ນິຕິກໍາກ່ຽວຂ້ອງ ເຊິ່ງບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ຮັບຄັດເລືອກເປັນທີ່ປຶກສາທາງດ້ານການເງິນ ແລະ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນເພີ່ມທຶນຄັ້ງນີ້;

- ໃນເດືອນ ສິງຫາ 2025 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອອກໃບອະນຸຍາດໃຫ້ ທຄຕລ ອອກຈຳໜ່າຍຮຸ້ນ ຈຳນວນ 506,255,500 ຮຸ້ນ, ເຊິ່ງຈຳໜ່າຍໃຫ້ແກ່ຜູ້ຮຸ້ນເດີມໃນລາຄາ 1,640 ກີບຕໍ່ຮຸ້ນ ແລະ ມວນຊົນທົ່ວໄປ ໃນລາຄາ 1,730 ກີບຕໍ່ຮຸ້ນ, ມູນຄ່າລະດົມທຶນທັງໝົດ 833,333,168,000 ກີບ;
- ໃນລະຫວ່າງ ວັນທີ 22-26/09/2025 ທຄຕລ ສຳເລັດການເປີດຈອງຊື້ຮຸ້ນ ສຳລັບຜູ້ຖືຮຸ້ນເດີມ ອອກຈຳໜ່າຍຮຸ້ນໄດ້ທັງໝົດ 472,098,300 ຮຸ້ນ ແລະ ລະຫວ່າງວັນທີ 29/09-03/10/2025 ໄດ້ສຳເລັດການເປີດຈອງຊື້ຮຸ້ນ ໃຫ້ແກ່ມວນຊົນທົ່ວໄປ ອອກຈຳໜ່າຍຮຸ້ນໄດ້ທັງໝົດ 34,157,200 ຮຸ້ນ, ເຊິ່ງຖືວ່າຮຸ້ນທີ່ສະເໜີອອກມາຈຳໜ່າຍຖືກຈອງຊື້ທັງໝົດ ລວມມູນຄ່າລະດົມທຶນຕົວຈິງ ຈຳນວນ 841,911,622,580 ກີບ;
- ໃນເດືອນ ຕຸລາ 2025 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນເພີ່ມທຶນ ຈຳນວນ 841,911,622,580 ກີບ ແບ່ງເປັນ ທຶນຈົດທະບຽນ 506,255,500,000 ກີບ ແລະ ສ່ວນເພີ່ມມູນຄ່າຮຸ້ນ ຈຳນວນ 335,656,122,850 ກີບ; ວັນທີ 05/11/2025 ທຄຕລ ສຳເລັດການຈົດທະບຽນຮຸ້ນເພີ່ມທຶນ ຈາກຕະຫຼາດຫຼັກຊັບລາວ ຜູ້ຖືຮຸ້ນສາມາດຊື້ຂາຍຮຸ້ນໃໝ່ເພີ່ມທຶນໄດ້ໃນຕະຫຼາດຂັ້ນສອງ;
- ວັນທີ 06/03/2026 ທຄຕລ ສຳເລັດການແຈ້ງປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ມີທຶນຈົດທະບຽນ 1,544,872,000,000 ກີບ, ມີຈຳນວນຮຸ້ນ 1,544,872,000 ຮຸ້ນ ມູນຄ່າໜ້າບັດຮຸ້ນ 1,000 ກີບ/ຮຸ້ນ. ສຳລັບໂຄງສ້າງຜູ້ຖືຮຸ້ນແມ່ນບໍ່ປ່ຽນແປງ.

○ **ວຽກງານການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ທະນາຄານລາວ-ຝຣັ່ງ ຈຳກັດ:**

- ພາຍຫຼັງສຳເລັດການຮັບຮອງໃນກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024 ທີ່ຜ່ານມາ, ທຄຕລ ໄດ້ດຳເນີນການລາຍງານ ແລະ ຂໍອະນຸຍາດຜູ້ຄຸ້ມຄອງພາກລັດ ຕາມນິຕິກຳທີ່ກ່ຽວຂ້ອງ ເພື່ອດຳເນີນການຂໍອະນຸຍາດໃນການຂາຍຮຸ້ນໃນຈຳນວນດັ່ງກ່າວອອກ. ທຄຕລ ໄດ້ດຳເນີນການຊອກຫາບໍລິສັດຜູ້ຊື້ທີ່ມີເງື່ອນໄຂ ເຂົ້າມາຊື້ຮຸ້ນ ທະນາຄານລາວ-ຝຣັ່ງ ຫຼື ທຟລ ທີ່ ທຄຕລ ໄດ້ຖືຄອງຮຸ້ນຈຳນວນ 30% ເຊິ່ງ ຂາຮຸ້ນຝ່າຍຝຣັ່ງ (COFIBRED) ຖືຄອງຮຸ້ນ ທຟລ ຈຳນວນ 70% ໄດ້ແຈ້ງເຈດຈຳນົງຊື້ຮຸ້ນໃນສ່ວນຂອງ ທຄຕລ ຕ້ອງການຂາຍໄວ້ເອງ;
- ທຄຕລ ແລະ COFIBRED ໄດ້ຕົກລົງເຫັນດີຮ່ວມກັນໃນເບື້ອງຕົ້ນໃນການ ວ່າຈ້າງບໍລິສັດທີ່ປຶກສາ ເພື່ອປະເມີນມູນຄ່າຍຸດຕິທຳ (Fair Value) ແລະ ປະເມີນມູນຄ່າຕະຫຼາດ (Market Value) ຂອງລາຄາຮຸ້ນ ທຟລ ເຊິ່ງແມ່ນ ຜູ້ຊື້ ແລະ ຜູ້ຂາຍຕ່າງຝ່າຍຕ່າງວ່າຈ້າງບໍລິສັດປະເມີນເອງ;
- ສຳລັບຂັ້ນຕອນການຄັດເລືອກບໍລິສັດແມ່ນເປັນໄປຕາມລະບຽບການຈັດຊື້ຈັດຈ້າງ ແລະ ການປະມູນແບບເປີດກວ້າງ ມີບໍລິສັດເຂົ້າຮ່ວມຍື່ນຊອງປະມູນຈຳນວນ 03 ບໍລິສັດ ເຊິ່ງ ທຄຕລ ໄດ້ ວ່າຈ້າງ ບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ ເປັນຜູ້ປະເມີນມູນຄ່າຮຸ້ນ ທລຝ, ມີມູນຄ່າການໃຫ້ບໍລິການຈຳນວນ 1,450,000,000 ກີບ;
- ໃນປັດຈຸບັນ ບໍລິສັດຫຼັກຊັບ ເອພີເອັມລາວ ຈຳກັດ ກຳລັງຢູ່ໃນຂັ້ນຕອນປະເມີນມູນຄ່າຮຸ້ນຂອງ ທຟລ ຄາດວ່າຈະໄດ້ຮັບບົດລາຍງານປະເມີນມູນຄ່າຮຸ້ນພາຍໃນເດືອນພຶດສະພາ 2026, ທຄຕລ ຈະນຳໃຊ້ບົດລາຍງານດັ່ງກ່າວເປັນບ່ອນອີງໃນການເຈລະຈາກັບຜູ້ຊື້;
- ຈຸດຢືນຂອງ ທຄຕລ ແມ່ນຮັກສາຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ, ມູນຄ່າລົງທຶນໃນ ທລຝ ໃນເບື້ອງຕົ້ນແມ່ນ 150 ຕື້ກີບ ລາຄາຮຸ້ນທີ່ຈະຂາຍອອກຕ້ອງບໍ່ຕ່ຳກວ່າມູນຄ່າລົງທຶນໃນເບື້ອງຕົ້ນ ລວມກັບມູນຄ່າຄາດ

ຄະແນນຜົນຕອບແທນຈາກການລົງທຶນຕະຫຼອດໄລຍະເວລາທີ່ໄດ້ລົງທຶນຈົນເຖິງປັດຈຸບັນ (ຫຼືດອກເບ້ຍ) ກໍລະນີຜົນການເຈລະຈາເຫັນວ່າ ທຄຕລ ເສຍຜົນປະໂຫຍດ ທຄຕລ ອາດພິຈາລະນາຍົກເລີກການຂາຍຮຸ້ນດັ່ງກ່າວ;

- ຄາດການວ່າຈະສາມາດສຳເລັດການປະເມີນມູນຄ່າຮຸ້ນ ແລະ ຮູ້ຜົນການເຈລະຈາພາຍໃນ ໄຕມາດທີ 03/2026 ພາຍຫຼັງສຳເລັດຈະໄດ້ເປີດເຜີຍຂໍ້ມູນເພື່ອລາຍງານໃຫ້ຜູ້ຖືຮຸ້ນ ແລະ ນັກລົງທຶນຊາບຕື່ມ.

○ **ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ):**

- ພາຍຫຼັງສຳເລັດການຮັບຮອງໃນກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024 ທີ່ຜ່ານມາ, ທຄຕລ ໄດ້ດຳເນີນການຊອກຫາບໍລິສັດຜູ້ຊື້ທີ່ມີເງື່ອນໄຂ ເພື່ອຊື້ຮຸ້ນໃນຈຳນວນ 38,350,000 ຮຸ້ນ ທີ່ ທຄຕລ ຖືຄອງ ໃນບໍລິສັດ ຜ-ຟຟລ ແລະ ເຫັນວ່າ ລັດວິສາຫະກິດໄຟຟ້າລາວ ຫຼື ຟຟລ ທີ່ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງ ຜ-ຟຟລ ໄດ້ເຫັນດີຊື້ຮຸ້ນດັ່ງກ່າວ;
- ມາຮອດມື້ນີ້ຂໍລາຍງານໃຫ້ທີ່ປະຊຸມຊາບວ່າ ທຄຕລ ແລະ ລັດວິສາຫະກິດໄຟຟ້າລາວ ໄດ້ບັນລຸເງື່ອນໄຂການຊື້ຂາຍ ຮຸ້ນດັ່ງກ່າວ ແລະ ເຊັນສັນຍາກັນເປັນທີ່ຮຽບຮ້ອຍແລ້ວ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

❖ ***ທ່ານ ພຸດທະສອນ ໄຊຍະຈິດ:*** ① ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ທະນາຄານລາວ-ຝຣັ່ງ ຈຳກັດ ກ່ອນຈະຂາຍຕົວຈິງແມ່ນຈະໄດ້ມີການແຈ້ງໃຫ້ຜູ້ຖືຮຸ້ນໄດ້ຮັບຊາບຕື່ມອີກບໍ່? ② ລາຄາຮຸ້ນທີ່ ທຄຕລ ຖືຄອງຢູ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຕົກລົງຊື້ຂາຍໃນລາຄາເທົ່າໃດ?

➢ ***ທ່ານ ນ. ສາຍສະໝອນ ຈັນທະຈັກ,*** ຜູ້ອຳນວຍການ ທຄຕລ ໄດ້ຕອບຄຳຖາມຜູ້ຖືຮຸ້ນດັ່ງນີ້: ① ສຳລັບແຜນທີ່ ທຄຕລ ຈະຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ທະນາຄານລາວ-ຝຣັ່ງ ຈຳກັດ ແມ່ນໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມສາມັນຜູ້ຖືຮຸ້ນໃນຄັ້ງຜ່ານມາ ເປັນທີ່ຮຽບຮ້ອຍແລ້ວ ເຊິ່ງໃນກອງປະຊຸມຜູ້ຖືຮຸ້ນ ແມ່ນໄດ້ມອບສິດໃຫ້ສະພາບໍລິຫານ ດຳເນີນການຂາຍຮຸ້ນໃນຄັ້ງນີ້ ພາຍໃຕ້ເງື່ອນໄຂທີ່ວ່າ ການຂາຍຮຸ້ນ ແມ່ນຕ້ອງໄດ້ປົກປ້ອງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ, ເຊິ່ງສະພາບໍລິຫານ ແມ່ນຈະພະຍາຍາມເຕັມທີ່ໃນການຕໍ່ລອງລາຄາຂາຍ ກັບ ຜູ້ຊື້ (COFIBRED) ແລະ ພາຍຫຼັງສຳເລັດການຂາຍຕົວຈິງ ຈະມີການແຈ້ງໃຫ້ຜູ້ຖືຮຸ້ນຊາບໃນກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ; ② ສຳລັບລາຄາທີ່ຕົກລົງໃນການຊື້ຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໃນເບື້ອງຕົ້ນແມ່ນຕົກລົງຕາມລາຄາຮຸ້ນໃນໜ້າກະດານຂອງຕະຫຼາດຫຼັກຊັບລາວ ໃນມື້ຕົກລົງຊື້-ຂາຍ, ແຕ່ພາຍຫຼັງເຈລະຈາເພີ່ມຕື່ມກັບ ຜູ້ຊື້ກໍຄື ລັດວິສາຫະກິດໄຟຟ້າລາວ ແມ່ນຕົກລົງຊື້ຂາຍໃນ ລາຄາ 3,800 ກີບ/ຮຸ້ນ ພາຍຫຼັງສຳເລັດການຊື້ຂາຍແລ້ວ ແມ່ນຈະແຈ້ງໃຫ້ຜູ້ຖືຮຸ້ນໄດ້ຮັບຊາບໃນກອງປະຊຸມຄັ້ງຕໍ່ໄປເຊັ່ນກັນ.

❖ ***ທ່ານ ປອ. ສຸດທິເດດ ບຸນລິໄຊ***: ທຄຕລ ມີຍຸດທະສາດແນວໃດ ຈຶ່ງຂາຍຮຸ້ນທີ່ຖືຄອງຢູ່ທະນາຄານລາວ-ຝຣັ່ງ ຈຳກັດ ແລະ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ?

➢ ***ທ່ານ ນ. ສາຍສະໝອນ ຈັນທະຈັກ,*** ຜູ້ອຳນວຍການ ທຄຕລ ໄດ້ສະແດງຄວາມຂອບໃຈ ແລະ ຕອບຄຳຖາມຜູ້ຖືຮຸ້ນ: ໃນເວລານັ້ນແມ່ນໄດ້ມີການຄົ້ນຄວ້າບົນພື້ນຖານຄວາມໝັ້ນຄົງທາງດ້ານການເງິນ ຂອງ ທຄຕລ ເປັນຕົ້ນຕໍ, ປະເດັນທີໜຶ່ງ ແມ່ນແນໃສ່ເຮັດໃຫ້ຜູ້ຖືຮຸ້ນໄດ້ຮັບຜົນປະໂຫຍດສູງສຸດ, ປະເດັນທີ່ສອງ ເພື່ອແກ້ໄຂ

ແລະ ປະຕິບັດຕາມຂໍ້ກຳນົດ ທີ່ທະນາຄານແຫ່ງ ສປປລາວ (ທຫລ) ກຳນົດອອກແຕ່ລະໄລຍະ ເປັນຕົ້ນແມ່ນ ອັດຕາສ່ວນຄວາມໝັ້ນຄົງຂອງທະນາຄານທຸລະກິດ ໃຫ້ຢູ່ໃນລະດັບບໍ່ໃຫ້ຫຼຸດ 8%.

- ສຳລັບຄຳຖາມທີໜຶ່ງ ກ່ຽວກັບການຄົ້ນຄວ້າການຂາຍຮຸ້ນທີ່ຖືຄອງຢູ່ ທະນາຄານລາວ-ຝຣັ່ງ ຈຳກັດ ໃນໄລຍະທຳອິດຂອງການສ້າງຕັ້ງ ໃໝ່ຂອງທະນາຄານລາວ-ຝຣັ່ງ ຈຳກັດ ເພື່ອເຮັດໃຫ້ສາມາດເຄື່ອນໄຫວທຸລະກິດໄດ້ ມີຄວາມຈຳເປັນໃຫ້ມີທະນາຄານທຸລະກິດໃນ ສປປ ລາວ ມີສ່ວນຮ່ວມໃນການສ້າງຕັ້ງໃນເບື້ອງຕົ້ນ ເຊິ່ງມາຮອດປັດຈຸບັນນີ້ ເຫັນວ່າ ທະນາຄານລາວ-ຝຣັ່ງ ຫຼື ຂາຮຸ້ນ COFIBRED ສາມາດເຄື່ອນໄຫວທຸລະກິດໄດ້ຢ່າງຄ່ອງຕົວແລ້ວ ແລະ ມີຜົນສຳເລັດໃນການດຳເນີນທຸລະກິດເປັນກ້າວໆມາ. ນອກຈາກນີ້, ທະນາຄານລາວ-ຝຣັ່ງ ຈຳກັດ ກໍ່ດຳເນີນທຸລະກິດດ້ານການທະນາຄານຄືກັນ ເຊິ່ງອາດມີລັກສະນະຂັດແຍ່ງດ້ານຜົນປະໂຫຍດ (Conflict of Interest) ຕໍ່ກັບ ທຄຕລ. ດ້ວຍເຫດນີ້, ທຄຕລ ຈຶ່ງໄດ້ຕັດສິນໃຈຖອນການລົງທຶນ ຫຼື ຂາຍຮຸ້ນອອກ ໂດຍຄວາມເປັນເອກະພາບເຫັນດີຈາກຂາຮຸ້ນທັງສອງຝ່າຍແລ້ວ, ເຖິງແມ່ນວ່າຈະມີການຂາຍຮຸ້ນອອກແລ້ວກໍຕາມ ທຄຕລ ກໍ່ຍັງຍິນດີໃຫ້ການຮ່ວມມື ແລະ ຊ່ວຍເຫຼືອທຸກຮູບແບບໃຫ້ແກ່ທະນາຄານລາວ-ຝຣັ່ງ ຈຳກັດ ເຊັ່ນເດີມ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.
- ສຳລັບຄຳຖາມທີສອງ ສຳລັບການຂາຍຮຸ້ນທີ່ຖືຄອງຢູ່ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນຕິດພັນກັບການລົງທຶນຂອງທະນາຄານ ເຊິ່ງ ທຄຕລ ແມ່ນທະນາຄານທຸລະກິດລັດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຈຸດປະສົງການດຳເນີນທຸລະກິດຕົ້ນຕໍແມ່ນການເຄື່ອນໄຫວທຸລະກິດທາງດ້ານທະນາຄານ. ຈາກສະພາບດັ່ງກ່າວນີ້, ທຄຕລ ຈຶ່ງໄດ້ປະເມີນ ແລະ ທົບທວນການລົງທຶນໃນທຸລະກິດແຕ່ລະດ້ານຄືນໃໝ່ ຈຶ່ງເຫັນວ່າ ອີງໃສ່ຄວາມຄຸ້ມຄ່າໃນການລົງທຶນມີຄວາມຈຳເປັນຕ້ອງຖອນການລົງທຶນ ໂດຍຂາຍຮຸ້ນທີ່ຖືຄອງຢູ່ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ອອກ ເຊິ່ງໄດ້ມີການຄົ້ນຄວ້າເປັນອັນລະອຽດໄວ້ແລ້ວ.
- ທ່ານຜູ້ອຳນວຍການໄດ້ແຈ້ງຕໍ່ກອງປະຊຸມ ການລາຍງານໃນວາລະນີ້ ແມ່ນເພື່ອໃຫ້ຮັບຊາບ ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ທີ່ກອງປະຊຸມໄດ້ຮັບຮອງໃນກອງປະຊຸມຄັ້ງກ່ອນໜ້າ

**ວາລະນີ້ ເພື່ອຮັບຊາບ; ສະນັ້ນ, ກອງປະຊຸມບໍ່ຈຳເປັນລົງຄະແນນສຽງໃດໆ.**

**ວາລະທີ 03: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2025**

**ທ່ານ ນ. ສາຍສະໝອນ ຈັນທະຈັກ,** ຜູ້ອຳນວຍການ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມໄດ້ຮັບຊາບກ່ຽວກັບຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2025 ທີ່ຜ່ານການກວດສອບແລ້ວ ເຊິ່ງມີບາງການເຄື່ອນໄຫວສຳຄັນດັ່ງນີ້:

- ສຳເລັດການຈ່າຍເງິນປັນຜົນ ຈຳນວນ 100 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

- **ຈັດກອງປະຊຸມໃຫຍ່ທີ່ສຳຄັນຄື:**

- ສຳເລັດການຈັດກອງປະຊຸມຜູ້ຖືຮຸ້ນ ຈຳນວນ 02 ຄັ້ງ (ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ແລະ ສະໄໝວິສາມັນ ປະຈຳປີ 2025);
- ຈັດກອງປະຊຸມສະພາບໍລິຫານ ທຄຕລ 09 ຄັ້ງ (ສະໄໝສາມັນ 04 ຄັ້ງ, ສະໄໝວິສາມັນ 05 ຄັ້ງ);
- ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 03 ຄັ້ງ;

- **ການເພີ່ມທຶນຈົດທະບຽນ:**

- ສຳເລັດການເພີ່ມທຶນຈຳນວນ 841 ກວ່າຕື້ກີບ, ດ້ວຍການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ (RO/PO);

- **ຮັບຮອງແຜນ:**

- ຮັບຮອງແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025–2029 ແລະ ແຜນທຸລະກິດ ປະຈຳປີ 2025;

- **ວຽກງານ KPI:**

- ສຳເລັດການຍ້ອງຍໍ, ການມອບລາງວັນຜົນງານການປະຕິບັດວຽກງານ KPI ແລະ ການຈັດຂັ້ນສາຂາ, ໜ່ວຍບໍລິການ ປະຈຳປີ 2024 ຂອງສາຂາ ທົ່ວລະບົບ;
- ຮັບຮອງການກຳນົດ KPI ຂອງສາຂາປະຈຳປີ 2025;

- **ພັດທະນາ ແລະ ປັບປຸງຜະລິດຕະພັນ:**

- ພັດທະນາ ແລະ ປັບປຸງຜະລິດຕະພັນ ເພື່ອຕອບໂຈດຄວາມຕ້ອງການລູກຄ້າເຊັ່ນ: ຜະລິດຕະພັນ One Bank, One Bank Kid, One Pay Shop, ATM UnionPay Virtual Card, E-Statement, ການຊື້-ຂາຍຮຸ້ນຜ່ານ BCEL One, ໃຫ້ບໍລິການຊຳລະສະສາງຊື້ຂາຍຄຳລະຫວ່າງ ທຄຕລ ແລະ ທະນາຄານຄຳ, ຕູ້ຖອນເງິນຫຼາຍສະກຸນ (ຢວນ ແລະ ບາດ) ແລະ ຕູ້ແລກປ່ຽນເງິນຕາຕ່າງປະເທດ; ຍົກລະດັບຕົວແທນ BCOME Super Agent 2ແຫ່ງ; ຂະຫຍາຍຕົວແທນບີຄຳ 176 ຕົວແທນ ແລະ ມັນນີແກຣມ 23 ຕົວແທນ;

- **ການຮ່ວມມືດ້ານທຸລະກິດ:**

- ສຳເລັດການຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນ: ເຊື່ອມຕໍ່ລະບົບຊື້-ຂາຍປະກັນໄພຮ່ວມກັບບໍລິສັດປະກັນໄພແຫ່ງປະເທດລາວ; ເຊື່ອມຕໍ່ລະບົບຊຳລະສະສາງຊື້-ຂາຍຄຳ ຮ່ວມກັບທະນາຄານຄຳ; ປັບປຸງລະບົບ LaPass; ເຊື່ອມຕໍ່ລະບົບ CMS ຂອງ ທຫລ; ຮ່ວມມືວຽກງານ Smart Cash ກະຊວງການເງິນ ຜ່ານລະບົບ Finlink;

- **ດ້ານຕາໜ່າງບໍລິການ:**

- ຍົກລະດັບໜ່ວຍບໍລິການໄຊສົມບູນ ເປັນ ສາຂາໄຊສົມບູນ; ຍົກຍ້າຍສະຖານທີ່ໜ່ວຍບໍລິການບໍລິການຕະຫຼາດຫຼັກຊັບໄປດົງຄຳຊ້າງ ແລະ ຍົກລະດັບຫ້ອງແລກປ່ຽນເຊໂນໃຫ້ເປັນໜ່ວຍບໍລິການເຊໂນ;

- **ລາງວັນຊົງກຽດທີ່ໄດ້ຮັບ:**

- ລາງວັນດີເດັ່ນດ້ານຄຸນະພາບທຸລະກຳເງິນໂອນຕ່າງປະເທດ ຈາກ JP Morgan Chase Bank; ລາງວັນນັກທຸລະກິດຊັ້ນນຳດີເດັ່ນ ຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ; ລາງວັນຄຸນະພາບການບໍລິການຜ່ານລະບົບຂອງບໍລິສັດ LAPNet; ລາງວັນ ຜູ້ບໍລິຫານຍິງດີເດັ່ນ-ສາຂາທະນາຄານ ປະຈຳປີ 2025 ຈາກອົງກອນ Women’s Tabloid ແລະ ລາງວັນຈາກຕະຫຼາດຫຼັກຊັບລາວ 07 ລາງວັນຄື: ລາງວັນການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ, ລາງວັນການຄຸ້ມຄອງບໍລິຫານດີເດັ່ນ, ລາງວັນບໍລິສັດທີ່ມີຜົນການເຄື່ອນໄຫວທຸລະກິດດີເດັ່ນ, ລາງວັນຜູ້ລົງທຶນສຳພັນດີເດັ່ນ, ລາງວັນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີດີເດັ່ນ, ລາງວັນບໍລິສັດລະດົມທຶນດີເດັ່ນ ແລະ ໃບຍ້ອງຍໍການເປີດເຜີຍຂໍ້ມູນປະຈຳປີ 2025.

ນອກຈາກນັ້ນ, ທ່ານຜູ້ອຳນວຍການໄດ້ລາຍງານຜົນການດຳເນີນທຸລະກິດປະຈຳປີ 2025 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PwC ແລະ ຮັບຮອງຈາກສະພາບໍລິຫານ ມີດັ່ງນີ້:

- ຍອດຊັບສິນ: 160,756 ຕື້ກີບ, ທຽບໃສ່ແຜນການປີ 2025 ປະຕິບັດໄດ້ 102.39%;
- ຍອດເງິນຝາກ: 150,847 ຕື້ກີບ, ທຽບໃສ່ແຜນການປີ 2025 ປະຕິບັດໄດ້ 104.03%;
- ຍອດເງິນກູ້ທັງໝົດ: 69,513 ຕື້ກີບ, ທຽບໃສ່ແຜນການປີ 2025 ປະຕິບັດໄດ້ 105.81%;
- ອັດຕາສ່ວນ NPL: 2.76%;
- ກຳໄລສຸດທິ: 932 ຕື້ກີບ, ທຽບໃສ່ແຜນການປີ 2025 ປະຕິບັດໄດ້ 161.90%.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

❖ **ທ່ານ Souvanrith Im**: ກ່ຽວກັບບົດລາຍງານການກວດສອບເອກະສານລາຍງານການເງິນປະຈຳປີ 2025 ທາງດ້ານຜູ້ກວດສອບອິດສະລະ ແມ່ນມີຄຳເຫັນແບບມີເງື່ອນໄຂ (Qualified) ຫຼື ບໍ່ມີເງື່ອນໄຂ (Unqualified)?

❖ **ທ່ານ ພຸດທະສອນ ໄຊຍະຈິດ**: ການດຳເນີນງານຂອງທຸລະກິດທະນາຄານ ໃນການບໍລິການອື່ນໆຂອງທະນາຄານ ເປັນຕົ້ນແມ່ນຮ້ານຄ້າ One X ແລະ ການປ່ອຍສິນເຊື່ອສ່ວນບຸກຄົນ ໃນ BCEL One ທາງຜູ້ບໍລິຫານສາມາດນຳສະເໜີຕົວເລກການເຕີບໂຕຄືແນວໃດ?

➢ **ທ່ານ ສາຍສະໝອນ ຈັນທະຈັກ,** ຜູ້ອຳນວຍການ ທຄຕລ ໄດ້ຕອບຄຳຖາມຜູ້ຖືຮຸ້ນດັ່ງນີ້: ທຄຕລ ໄດ້ຮັບການກວດສອບຈາກ ບໍລິສັດ PwC ສອງມາດຕະຖານຄື: ມາດຕະຖານບັນຊີລາວ (LAS) ແລະ ມາດຕະຖານສາກົນ (IFRS). ສຳລັບມາດຕະຖານລາວ ທຄຕລ ສາມາດຈັດຕັ້ງປະຕິບັດຄົບຖ້ວນຕາມລະບຽບການກຳນົດ ແຕ່ໃນດ້ານການກວດສອບຕາມມາດຕະຖານສາກົນ ທຄຕລ ຍັງບໍ່ທັນສາມາດປະຕິບັດໄດ້ເຕັມສ່ວນ (IFRS Full version). ການກວດສອບຂອງ PwC ແມ່ນກວດສອບສຳລັບເພື່ອຈຸດປະສົງພິເສດ ຫຼື IFRS special purpose; ຕິດພັນຕົວເລກການເຕີບໂຕຂອງສິນເຊື່ອບຸກຄົນໃນໄລຍະຜ່ານມາ ທຄຕລ ແມ່ນມີລາຍລະອຽດໝົດແລ້ວ ແຕ່ຂ້າພະເຈົ້າບໍ່ທັນໄດ້ຮັບຕົວເລກເທື່ອ. ຂໍໃຫ້ພະແນກ ທີ່ກ່ຽວຂ້ອງຖ້າມີຕົວເລກດັ່ງກ່າວ ໃຫ້ລາຍງານຕື່ມ.

➢ **ທ່ານ ພອນນະລັດ ກອງອິງສາ** (ຕາງໜ້າພະແນກບັນຊີສັງລວມ ທຄຕລ) ໄດ້ອະທິບາຍເພີ່ມຕື່ມ: ຄຳເຫັນຂອງຜູ້ກວດສອບພາຍນອກໃນບົດລາຍງານການເງິນແມ່ນມີຄຳເຫັນ **Unqualified (ບໍ່ມີເງື່ອນໄຂ)** ຈຸດປະສົງທີ່ກວດສອບໄດ້ເນັ້ນໜັກໃຫ້ ທຄຕລ ຕ້ອງໄດ້ເອົາໃຈໃສ່ພິຈາລະນາເບິ່ງຄືນການຫັກສຳຮອງຄ່າເສື່ອມສິນເຊື່ອ ທີ່ອາດຈະມີຜົນກະທົບຕໍ່ການດຳເນີນທຸລະກິດຂອງທະນາຄານ ເຊິ່ງຖ້າທະນາຄານຫັກຄ່າເສື່ອມສູງ ກໍຈະສົ່ງຜົນເຮັດໃຫ້ກຳໄລໜ້ອຍລົງ ເຊິ່ງນີ້ກໍເປັນຂໍ້ສັງເກດຂອງຜູ້ກວດສອບທີ່ມີຕໍ່ບົດລາຍງານການເງິນ.

➢ **ທ່ານ ນັນທະລາດ ແກ້ວປະເສີດ**, ຮອງຜູ້ອຳນວຍການ ທຄຕລ ໄດ້ຊີ້ແຈງຕໍ່ຄຳຖາມຂອງຜູ້ຖືຮຸ້ນວ່າ: ຕິດພັນຟັງຊັນ One X ແມ່ນເປັນແພັດຟອມທີ່ ທຄຕລ ຮ່ວມມືກັບຄູ່ຮ່ວມທຸລະກິດພາຍນອກ ເຊິ່ງເປັນພື້ນທີ່ ຊື້-ຂາຍ ສິນຄ້າອອນລາຍ. ໃນກໍລະນີ ຢາກເຫັນຕົວເລກລາຍຮັບຄ່າທຳນຽມຕາມການລາຍງານເປີດເຜີຍຂໍ້ມູນນັ້ນ ແມ່ນຈະບໍ່ເຫັນໃນບົດລາຍງານໂດຍກົງ ເນື່ອງຈາກວ່າ ລາຍຮັບຄ່າທຳນຽມຈາກການຊື້-ຂາຍ ສິນຄ້າອອນລາຍ ໃນ One X ແມ່ນນອນໃນໝວດຜະລິດຕະພັນ E-Commerce. ສຳລັບຕົວເລກຕິດພັນຜະລິດຕະພັນສິນເຊື່ອສ່ວນບຸກຄົນ ຕົວເລກລາຍຮັບທີ່ເປັນທາງການ ແມ່ນຈະນອນໃນໝວດລາຍຮັບດອກເບ້ຍເງິນກູ້ ເຊິ່ງໃນປັດຈຸບັນຢູ່ໃນແຜນຂະຫຍາຍໄລຍະທີສອງ.

ເມື່ອບໍ່ມີຄຳເຫັນໃດໆຕື່ມແລ້ວ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,723,090** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 04: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2025 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ.**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມພິຈາລະນາ ແລະ ຮັບຮອງການຈັດສັນກຳໄລຫຼັງອາກອນປະຈຳປີ 2025 ເພື່ອຈ່າຍເຂົ້າຄັງຕ່າງໆຕາມລະບຽບການ, ຈ່າຍໂບນັດສຳລັບຜູ້ບໍລິຫານແລະພະນັກງານ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
- ແບ່ງຈ່າຍໂບນັດສຳລັບຜູ້ບໍລິຫານ ແລະ ພະນັກງານ: **5%**;
- ຈ່າຍເງິນປັນຜົນ: ຈຳນວນ **200 ກີບ/ຮຸ້ນ** ລວມມູນຄ່າເງິນປັນຜົນທັງໝົດ **308,974,400,000.00 ກີບ**;
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **15 ພຶດສະພາ 2026**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້; ປະທານກອງປະຊຸມ ຈຶ່ງໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,723,090** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈຳປີ 2026**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມ ກ່ຽວກັບສະພາບການດຳເນີນທຸລະກິດຂອງ ທຄຕລ ໃນປີ 2026 ເຊິ່ງ ທຄຕລ ສືບຕໍ່ປະເຊີນກັບສິ່ງທ້າທາຍຫຼາຍດ້ານ ຈາກສະພາບການຜັນຜວນຂອງເສດຖະກິດໂລກ, ພາກພື້ນ ແລະ ເສດຖະກິດມະຫາພາກ ທີ່ຍັງຄົງມີຄວາມບໍ່ແນ່ນອນສູງ. ໃນການສ້າງແຜນທຸລະກິດຂອງ ທຄຕລ ປະຈຳປີ 2026 ແມ່ນໄດ້ຄຳນຶງເຖິງປັດໄຈຕ່າງໆທີ່ອາດສົ່ງຜົນກະທົບຕໍ່ຜົນການດຳເນີນທຸລະກິດຢ່າງຮອບດ້ານ ທັງປັດໄຈພາຍໃນ ແລະ ປັດໄຈພາຍນອກ. ເຖິງຢ່າງໃດກໍຕາມ, ໃນພາບລວມ ທຄຕລ ຈະມຸ່ງໝັ້ນຕັ້ງໃຈຊຸກຍູ້ໃຫ້ຕົວເລກຜົນການດຳເນີນງານໃນທຸກດ້ານ ມີການຂະຫຍາຍຕົວໃນທິດທາງທີ່ດີ ດ້ວຍການເພີ່ມປະສິດທິພາບການດຳເນີນງານ, ຍົກລະດັບຄຸນນະພາບການໃຫ້ບໍລິການ, ຂະຫຍາຍຖານລູກຄ້າ, ແລະ ຄວບຄຸມຄ່າໃຊ້ຈ່າຍໃຫ້ຢູ່ໃນລະດັບທີ່ເໝາະສົມ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ຄວາມຍືນຍົງຂອງທຸລະກິດໃນໄລຍະຍາວ. ສະນັ້ນ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມພິຈາລະນາຮັບຮອງເອົາແຜນການປະຈຳປີ 2026 ເຊິ່ງມີຄາດໝາຍບາງຕົວເລກສຳຄັນ ຕົ້ນຕໍດັ່ງນີ້:

- ຍອດຊັບສິນ: ບໍ່ຫຼຸດ **173,500** ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2025 ເພີ່ມຂຶ້ນ **7.93%**;
- ຍອດເງິນຝາກ: ບໍ່ຫຼຸດ **161,000** ຕື້ກີບ ທຽບໃສ່ທ້າຍປີ 2025 ເພີ່ມຂຶ້ນ **6.73%**;
- ຍອດເງິນກູ້ທັງໝົດ: ບໍ່ຫຼຸດ **64,000** ຕື້ກີບ ທຽບໃສ່ທ້າຍປີ 2025 ຫຼຸດລົງ **7.93%** ເຊິ່ງບໍ່ແມ່ນການປ່ອຍສິນເຊື່ອຫຼຸດລົງ ເນື່ອງຈາກວ່າລູກຄ້າລາຍໃຫຍ່ຂອງ ທຄຕລ ມີແຜນຊຳລະເງິນກູ້ກ່ອນກຳນົດ ແລະ ເປັນຜົນດີສຳລັບທະນາຄານ ເຮັດໃຫ້ຈະມີແຫຼ່ງທຶນເພີ່ມຂຶ້ນ ເພື່ອໄປບໍລິຫານແຫຼ່ງທຶນທີ່ສ້າງຜົນຕອບແທນໃຫ້ຜູ້ຖືຮຸ້ນ. ຖ້າເບິ່ງສະເພາະແຜນຂະຫຍາຍສິນເຊື່ອໃໝ່ ແມ່ນເພີ່ມຂຶ້ນ **7%** ທຽບໃສ່ທ້າຍປີ 2025.
- NPL ທັງໝົດ: ບໍ່ໃຫ້ເກີນ **3%** ຂອງຍອດເງິນກູ້ທັງໝົດ;
- ກຳໄລກ່ອນອາກອນ: ຢູ່ໃນລະດັບ **1,337** ຕື້ກີບ;
- ກຳໄລສຸດທິ: ບໍ່ຫຼຸດ **1,070** ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2025 ເພີ່ມຂຶ້ນ **14.74%**;
- ແຜນຂະຫຍາຍຕາໜ່າງບໍລິການ: **06** ແຫ່ງ ໃນນັ້ນ, ເປັນການຂະຫຍາຍໜ່ວຍບໍລິການໃໝ່ **05** ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ **01** ແຫ່ງ ແລະ ແຜນລົງສຳຫຼວດຄວາມເປັນໄປໄດ້ໃນການຂະຫຍາຍຕາໜ່າງບໍລິການ **03** ແຫ່ງ.
- ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ: **1,168** ຕື້ກີບ;
- ແຜນຮັບພະນັກງານໃໝ່: **39** ຄົນ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

❖ ***ທ່ານ ໄກອັນ ກາດາອານິດ*** : ໃນປະເດັນຂອງໜີ້ເສຍ ຫຼື NPL ນັ້ນ ແຕ່ລະທະນາຄານມີເງື່ອນໄຂ ແລະ ວິທີການທີ່ຈະປ້ອງກັນໜີ້ເສຍຂອງຕົນເອງໃຫ້ດີທີ່ສຸດ, ໃນກໍລະນີທີ່ບັນຊີລູກຄ້າຖືກລະງັບໄວ້ ແຕ່ລູກຄ້າກໍຍັງຈະຕ້ອງໄດ້ຊຳລະໜີ້ໃຫ້ທະນາຄານເຊັ່ນເດີມ, ເນື່ອງຈາກຂ້າພະເຈົ້າເອງກໍ່ເປັນລູກຄ້າທີ່ໃຊ້ບໍລິການນຳ ທຄຕລ ຈາກປະສົບການລ່າສຸດ ບັດ Credit ຂອງຂ້າພະເຈົ້າຕ້ອງການປ່ຽນບັດໃໝ່ ເນື່ອງຈາກບັດໝົດອາຍຸ, ແຕ່ບໍ່ສາມາດເຂົ້າໄປຊຳລະໜີ້ໃນບັດໄດ້ ທະນາຄານແຈ້ງວ່າຕ້ອງໄດ້ລໍຖ້າອອກບັດໃໝ່ສຳເລັດກ່ອນຈຶ່ງຈະສາມາດຊຳລະໜີ້ຄ້າງຈ່າຍໄດ້ ເຊິ່ງຂ້າພະເຈົ້າເຫັນວ່າ ສິ່ງດັ່ງກ່າວບໍ່ກົງກັບເງື່ອນໄຂຂໍ້ກຳນົດຂອງທະນາຄານທີ່ແຈ້ງອອກໄປ. ເຖິງແມ່ນວ່າ ບັດຈະຖືກລະງັບ ຫຼື ວ່າເລກບັດບໍ່ກົງກັນ ທະນະຄານບໍ່ຄວນປະຕິເສດການຊຳລະໜີ້ຂອງລູກຄ້າທຸກຮູບແບບ. ຈາກກໍລະນີນີ້, ອາດຈະເຮັດໃຫ້ມີລູກຄ້າບາງກຸ່ມບໍ່ຢາກຊຳລະໜີ້ ແລະ ເອົາມາເປັນເງື່ອນໄຂຂໍ້ອ້າງໃຫ້ແກ່ທະນາຄານ. ສະນັ້ນ, ຈຶ່ງຢາກສະເໜີໃຫ້ ທຄຕລ ປັບປຸງ ແລະ ແກ້ໄຂບັນຫາດັ່ງກ່າວ ເລີ່ມແຕ່ຕອນນີ້ເປັນຕົ້ນໄປ. ຕິດພັນການໃຫ້ບໍລິການທາງອອນລາຍຜ່ານ OneCare ໃນ BCEL One, ສະເໜີທະນາຄານພິຈາລະນາສາມາດພັດທະນາ ແລະ ປັບປຸງຕື່ມໂດຍທີ່ບໍ່ຕ້ອງອອກຄ່າໃຊ້ຈ່າຍເພີ່ມ ເຊັ່ນວ່າ: ບໍ່ຈຳເປັນໃຫ້ພະນັກງານຖາມລູກຄ້າທຸກຄັ້ງວ່າ ເບີທີ່ຜູກກັບ BCEL One ແມ່ນເບີໃດ? ເປັນລູກຄ້າລາຍໃດ? ຖ້າເປັນລູກຄ້າທີ່ສາມາດລ໋ອກອິນເຂົ້າ BCEL One ໄດ້ແລ້ວແມ່ນບໍ່ຈຳເປັນຕ້ອງຖາມຂໍ້ມູນສ່ວນຕົວຄືນ ເຊິ່ງເຮັດໃຫ້ຂັ້ນຕອນແກ້ໄຂບັນຫາຂອງພະນັກງານແກ່ລູກຄ້າໃຊ້ເວລາຫຼາຍ. ສະນັ້ນ, ຈຶ່ງສະເໜີໃຫ້ທາງທະນາຄານພິຈາລະນາຕື່ມ.

❖ ***ທ່ານ ພຸດທະສອນ ໄຊຍະຈິດ***: ໃນໄລຍະຜ່ານມາ ໃນກອງປະຊຸມຜູ້ຖືຮຸ້ນມີການລາຍງານເຖິງການສ້າງຕັ້ງບໍລິສັດບໍລິຫານຊັບສິນ ຂອງ ທຄຕລ ເຊິ່ງມາຮອດປັດຈຸບັນແມ່ນດຳເນີນງານຮອດຂັ້ນຕອນໃດແລ້ວ?

- **ທ່ານ ສອນນາລິນ ແສງມະນີ** ຫົວໜ້າກອງເລຂາກອງປະຊຸມ: ໄດ້ລາຍງານຄໍາຖາມຂອງຜູ້ຖືຮຸ້ນ ທີ່ໄດ້ຝາກສອບຖາມວ່າແຜນລົງສໍາຫຼວດໜ່ວຍບໍລິການໃໝ່ 03 ແຫ່ງ ແມ່ນເປັນແຜນເພື່ອອະນຸມັດລົງສໍາຫຼວດເບື້ອງຕົ້ນ ຫຼື ເປັນແຜນທີ່ຈະຂະຫຍາຍໃໝ່ເພີ່ມ?
- **ທ່ານ ສາຍສະໝອນ ຈັນທະຈັກ,** ຜູ້ອໍານວຍການ ທຄຕລ ໄດ້ອະທິບາຍ ແລະ ຊີ້ແຈງແຕ່ລະປະເດັນດັ່ງ:
  - ກ່ຽວກັບການປະກອບຄໍາເຫັນຂອງ **ທ່ານ ໄກອັນ ກາດາອານິດ** ຕໍ່ກັບຮູບແບບການຊໍາລະໜີ້ ແມ່ນຈະຂໍພິຈະລະນາຮັບເອົາໄປປັບປຸງ ແລະ ແກ້ໄຂ ລວມທັງການໃຫ້ບໍລິການແກ້ໄຂບັນຫາຜ່ານ OneCare. ໃນປັດຈຸບັນ, ການບໍລິການຜ່ານທາງອອນລາຍຂອງ ທຄຕລ ແມ່ນເພີ່ມຂຶ້ນ 70% ທຽບໃສ່ໄລຍະຜ່ານມາ ເຊິ່ງເຮັດໃຫ້ການບໍລິການຜ່ານເຄົາເຕີຫຼຸດລົງ ເຊິ່ງສະແດງໃຫ້ເຫັນວ່າ ລູກຄ້າແມ່ນຫັນໄປໃຊ້ບໍລິການຜ່ານທາງອອນລາຍຫຼາຍຂຶ້ນ. ສະນັ້ນ, ຈຶ່ງເຫັນໄດ້ວ່າ ທຄຕລ ຄວນສຸມໃສ່ໃຫ້ການບໍລິການ ແລະ ການຊ່ວຍເຫຼືອຜ່ານຊ່ອງທາງ OneCare ແລະ ສາຍດ່ວນຫຼາຍຂຶ້ນກວ່າເກົ່າ. ສໍາລັບດ້ານຮູບແບບວິທີການຖາມເພື່ອ KYC ລູກຄ້ານັ້ນເຫັນວ່າ ເປັນສິ່ງທີ່ດີ ເພື່ອຢັ້ງຢືນຕົວຕົນລູກຄ້າ. ເຖິງຢ່າງໃດກໍຕາມ, ທະນາຄານ ແມ່ນຈະຮັບເອົາໄປພິຈະລະນາປັບປຸງ ແລະ ແກ້ໄຂຕື່ມເພື່ອໃຫ້ມີຄວາມກະທັດຮັດ ແລະ ເໝາະສົມໃນການກວດສອບລູກຄ້າ;
  - ກ່ຽວກັບການສ້າງຕັ້ງບໍລິສັດບໍລິຫານຊັບສິນ ທີ່ **ທ່ານ ພຸດທະສອນ ໄຊຍະຈິດ** ໄດ້ສອບຖາມນັ້ນ, ທຄຕລ ແມ່ນໄດ້ການຄົ້ນຄວ້າມາໄລຍະໜຶ່ງແລ້ວ. ພາຍຫຼັງທີ່ໄດ້ປັບປຸງຄະນະບໍລິຫານງານຊຸດໃໝ່ ໄດ້ມີການທົບທວນພິຈະລະນາ ແລະ ປະເມີນການສ້າງຕັ້ງບໍລິສັດຄືນໃໝ່ ເຊິ່ງໃນເບື້ອງຕົ້ນເຫັນວ່າ ຄວນມີການຊະລໍອອກໄປກ່ອນ ເນື່ອງຈາກວ່າສະພາບການແກ້ໄຂໜີ້ຂອງ ທຄຕລ ໃນໄລຍະປັດຈຸບັນ ເຫັນວ່າມີປະສິດທິຜົນສູງ, ສາມາດແກ້ໄຂໄດ້ຫຼາຍທຽບໄລຍະຜ່ານມາ ແລະ ປະຕິບັດໄດ້ຕາມແຜນທີ່ກໍານົດໄວ້ໃນແຕ່ລະປີ. ພ້ອມນີ້, ປັດຈຸບັນ ໄດ້ມີ ບໍລິສັດລັດ ບໍລິຫານໜີ້ສິນ ແລະ ຊັບສິນຈໍາກັດຜູ້ດຽວ ພາຍໃຕ້ການຄຸ້ມຄອງຂອງ ທຫລ, ເຊິ່ງຖ້າຫາກ ທຄຕລ ບໍ່ສາມາດແກ້ໄຂໜີ້ດ້ວຍຕົນເອງໄດ້ ກໍ່ສາມາດໃຊ້ບໍລິການຂອງບໍລິສັດດັ່ງກ່າວໄດ້. ອີກຢ່າງໜຶ່ງ, ການສ້າງຕັ້ງບໍລິສັດໃໝ່ ຖືວ່າເປັນການລົງທຶນ ແລະ ມີຄ່າໃຊ້ຈ່າຍສູງຕິດພັນໃນຫຼາຍດ້ານຂອງການດໍາເນີນທຸລະກິດ ແລະ ບໍ່ສາມາດປະເມີນໄດ້ວ່າຈະສາມາດມີຈຸດຄຸ້ມທຶນໃນປີໃດ ເຊິ່ງເຫັນວ່າຈະມີຜົນກະທົບຕໍ່ອັດຕາສ່ວນຄວາມພຽງພໍຂອງທຶນ ແລະ ຜົນດໍາເນີນງານຂອງທະນາຄານ ທີ່ອາດຈະຫຼຸດລົງໄດ້. ນອກຈາກນີ້, ອີງໃສ່ຂໍ້ກໍານົດເງື່ອນໄຂ ຄວາມພຽງພໍຂອງທຶນ ເຫັນວ່າ ຖ້າມີການລົງທຶນໃໝ່ ແມ່ນຈະໄດ້ຖືກຫັກອອກຈາກທຶນ ຈະມີຜົນເຮັດໃຫ້ທຶນຫຼຸດລົງ ແລະ ທະນາຄານອາດຈະຕ້ອງປະກອບທຶນໃໝ່ຕື່ມ. ແຕ່ເຖິງຢ່າງໃດກໍ່ຕາມ, ກໍລະນີມີຄວາມຈໍາເປັນຕ້ອງໄດ້ສ້າງຕັ້ງບໍລິສັດບໍລິຫານຊັບສິນ, ທຄຕລ ແມ່ນຈະໄດ້ມີການຄົ້ນຄວ້າພິຈະລະນາຄືນໃໝ່ ແລະ ລາຍງານໃຫ້ຜູ້ຖືຮຸ້ນໃຫ້ຮັບຊາບຕື່ມ;
  - ສໍາລັບແຜນຂະຫຍາຍໜ່ວຍໃໝ່ ແລະ ແຜນລົງສໍາຫຼວດໜ່ວຍບໍລິການ ຖ້າປະເມີນແລ້ວເຫັນວ່າມີປະສິດທິຜົນຈຶ່ງຈະສືບຕໍ່ດໍາເນີນການ ອີງໃສ່ການສ້າງຕັ້ງໜ່ວຍບໍລິການໃໝ່ ແມ່ນຢູ່ບົນພື້ນຖານ ແລະ ເງື່ອນໄຂຕາມທີ່ ທຫລ ກໍານົດໄວ້. ພ້ອມນີ້, ສໍາຫຼັບແຜນລົງສໍາຫຼວດ ຖ້າເຫັນວ່າມີຄວາມຄຸ້ມຄ່າ ແລະ ມີປະສິດທິຜົນ ກໍອາດຈະພິຈະລະນາເປີດໜ່ວຍໃໝ່ໄດ້. ເຖິງຢ່າງໃດກໍຕາມ, ຖ້າວ່າ ທຄຕລ ບໍ່ໄດ້ຂະຫຍາຍໜ່ວຍບໍລິການ ກໍຍັງກົນໄກທີ່ຮອງຮັບການໃຫ້ບໍລິການເພື່ອສ້າງລາຍຮັບເພີ່ມໃຫ້ແກ່ທະນາຄານ ເປັນຕົ້ນແມ່ນການໃຫ້ບໍລິການຕົວແທນ BCOME ທີ່ເປັນ Super-Agent ແລະ ການຕິດຕັ້ງຕູ້ ATM ເພີ່ມໃນແຕ່ລະຂົງເຂດທີ່ບໍ່ມີໜ່ວຍບໍລິການ;
- **ທ່ານ ສຸວັນນີ ແສງມະນີ** (ຕາງໜ້າພະແນກຄົ້ນຄວ້າ ແລະ ພັດທະນາ): ໄດ້ຊີ້ແຈງວ່າ ແຜນສໍາຫຼວດໜ່ວຍບໍລິການ 03 ແຫ່ງ ທີ່ຮອງຮັບຈາກສະພາບໍລິຫານ ແມ່ນຍັງບໍ່ທັນໄດ້ລົງສໍາຫຼວດເທື່ອ ແລະ ພາຍຫຼັງທີ່ກອງປະຊຸມ

ຜູ້ຖືຮຸ້ນຮັບຮອງແຜນໃນມື້ນີ້ຈະເລີ່ມດຳເນີນການລົງສຳຫຼວດ. ສຳລັບແຜນຂະຫຍາຍໜ່ວຍບໍລິການໃໝ່ 06 ແຫ່ງ ແມ່ນໄດ້ຖືກຮັບຮອງໃນກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ ແລະ ລົງສຳຫຼວດເປັນທີ່ຮຽບຮ້ອຍແລ້ວ.

ເມື່ອບໍ່ມີຄຳເຫັນໃດໆຕື່ມແລ້ວ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,723,090** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 06: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະລະ ປະຈຳປີ 2026, 2027 ແລະ 2028**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ລາຍງານກ່ຽວກັບ ການແຕ່ງຕັ້ງຜູ້ກວດສອບເອກະສານລາຍງານການເງິນ ປະຈຳປີ 2026, 2027 ແລະ 2028 ເຊິ່ງໄລຍະຜ່ານມາ ທຄຕລ ໄດ້ນຳໃຊ້ຮູບແບບການລາຍງານຕາມມາດຕະຖານສາກົນ (ເພື່ອຈຸດປະສົງພິເສດ) ຫຼື (IFRS special purpose), ເພື່ອຈັດຕັ້ງປະຕິບັດຕາມແຜນການຫັນໄປສູ່ມາດຕະຖານການລາຍງານການເງິນສາກົນແບບເຕັມສ່ວນ (IFRS Full Versions) ຂອງທະນາຄານແຫ່ງ ສປປ ລາວ. ໃນປັດຈຸບັນ ທຄຕລ ໄດ້ດຳເນີນການຄົ້ນຄວ້າ ແລະ ກະກຽມຄວາມພ້ອມ ໂດຍວ່າຈ້າງທີ່ປຶກສາ ເພື່ອຫັນຄວາມພ້ອມທາງດ້ານການລາຍງານ ຕາມມາດຕະຖານສາກົນແບບເຕັມສ່ວນ (IFRS Full Versions). ອີງໃສ່ຂໍ້ຈຳກັດດ້ານເວລາ ແລະ ຂອບເຂດການກວດສອບທີ່ກວ້າງຂຶ້ນ ທຄຕລ ຢູ່ໃນຂັ້ນຕອນດຳເນີນການຄັດເລືອກ ປະມູນຈັດຊື້ຈັດຈ້າງຜູ້ກວດສອບອິດສະລະ ຕາມລະບຽບທີ່ກ່ຽວຂ້ອງ ເພື່ອອອກບົດລາຍງານໃຫ້ ທຄຕລ ຈຳນວນ 03 ບົດຄື:

1) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS);
2) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານສາກົນ (IFRS);
3) ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ (Management Letter);

ສຳລັບການແຕ່ງຕັ້ງຜູ້ກວດສອບ ປະຈຳປີ 2026, 2027 ແລະ 2028 ແຍກມູນຄ່າການກວດສອບອອກໄປ 02 ກໍລະນີຄື: 1) ກໍລະນີ ອອກບົດລາຍງານການເງິນຕາມມາດຕະຖານລາວ (LAS) ແລະ ຕາມມາດຕະຖານສາກົນ (ເພື່ອຈຸດປະສົງພິເສດ) ຫຼື IFRS special purpose ມູນຄ່າການກວດສອບລວມທັງ 3 ປີ ບໍ່ເກີນ 3,500,000,000 ກີບ (ໂດຍອັດຕາຄ່າກວດສອບຈະເພີ່ມຂຶ້ນບໍ່ເກີນ 15% ໃນແຕ່ລະປີການບັນຊີ); 2) ກໍລະນີ ອອກບົດລາຍງານການເງິນຕາມມາດຕະຖານລາວ (LAS) ແລະ ການລາຍງານການເງິນສາກົນແບບເຕັມສ່ວນ (IFRS Full Versions) ມູນຄ່າການກວດສອບ ທັງ 3 ປີ ບໍ່ເກີນ 9,500,000,000 ກີບ.

ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມຜູ້ຖືຮຸ້ນ ມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການດຳເນີນການຄັດເລືອກ, ແຕ່ງຕັ້ງ ຜູ້ກວດສອບປະຈຳປີ 2026, 2027 ແລະ 2028 ບົນພື້ນຖານຄວາມພ້ອມຂອງ ທຄຕລ ແລະ ຮັກສາຜົນປະໂຫຍດຂອງຜູ້ຖືຮຸ້ນ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

❖ **ທ່ານ Souvanrith Im**: ການຫັນໄປສູ່ມາດຕະຖານການລາຍງານການເງິນສາກົນແບບເຕັມສ່ວນ (IFRS Full Versions) ທຄຕລ ເລືອກບໍລິສັດໃດເປັນທີ່ປຶກສາ?

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ໄດ້ໃຫ້ຂໍ້ມູນວ່າ ທຄຕລ ໄດ້ເລືອກບໍລິສັດ Ernst & Young Lao (EY) ຊ່ວຍໃນການກະກຽມວຽກງານຮອບດ້ານ ເພື່ອກ້າວມາດຕະຖານການລາຍງານການເງິນສາກົນແບບເຕັມສ່ວນ (IFRS Full Versions).

ເມື່ອບໍ່ມີຄຳເຫັນໃດໆຕື່ມແລ້ວ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້. ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,723,090** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 07: ຮັບຮອງແຜນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນເພີ່ມທຶນຂອງ ທຄຕລ**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ລາຍງານຫຍໍ້ກ່ຽວກັບການເພີ່ມທຶນຈົດທະບຽນ ຈຳນວນ 506,255,500,000 ກີບ ໂດຍການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ປະຊາຊົນທົ່ວໄປ ເຊິ່ງສົ່ງຜົນໃຫ້ທຶນຈົດທະບຽນຂອງ ທຄຕລ ເພີ່ມຂຶ້ນຈາກ 1,038,616,500,000 ກີບ ເປັນ 1,544,872,000,000 ກີບ. ການເພີ່ມທຶນຄັ້ງນີ້ ຈຸດປະສົງກໍເພື່ອຍົກລະດັບອັດຕາສ່ວນຄວາມພຽງພໍຂອງທຶນ (CAR) ໃຫ້ເປັນໄປຕາມມາດຕະຖານຂັ້ນຕໍ່າທີ່ທະນາຄານແຫ່ງ ສປປ ລາວ ກຳນົດໄວ້. ໃນປັດຈຸບັນ ທຄຕລ ມີອັດຕາ CAR ດັ່ງນີ້:

- ອີງຕາມມາດຕະຖານການລາຍງານການເງິນສາກົນ (IFRS): CAR = 10.20%
- ອີງຕາມມາດຕະຖານບັນຊີລາວ (LAS) ສຳລັບປີ 2025: CAR = 11.68%.

ສຳລັບແຜນການນຳໃຊ້ທຶນ ກໍ່ເພື່ອໃຫ້ໄດ້ຮັບໃຫ້ເກີດປະໂຫຍດສູງສຸດ ແລະ ສ້າງຜົນຕອບແທນໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ເຊິ່ງຈຸດປະສົງເພີ່ມຄວາມເຂັ້ມແຂງທາງດ້ານການເງິນ, ຮັກສາສະພາບຄ່ອງ ແລະ ສ້າງຄວາມສົມດຸນໃນການບໍລິຫານທຶນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດໃນໄລຍະຍາວ ຈຶ່ງສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ ໂດຍມີເປົ້າໝາຍການນຳໃຊ້ທຶນດັ່ງນີ້:

1) ຮັບຮອງການລົງທຶນໃນການຂະຫຍາຍຕາໜ່າງບໍລິການ ແລະ ອັບເດດລະບົບບໍລິການຕາມແຜນປະກອບວັດຖຸເຕັກນິກຂອງ ທຄຕລ ບໍ່ເກີນ 25% ຂອງທຶນຈົດທະບຽນຕາມລະບຽບການທີ່ກ່ຽວຂ້ອງ;
2) ຮັບຮອງການນຳໃຊ້ເຂົ້າໃນແຜນທຸລະກິດຂອງ ທຄຕລ ເປັນຕົ້ນແມ່ນການຂະຫຍາຍສິນເຊື່ອ ແລະ ຜະລິດຕະພັນການໃຫ້ບໍລິການ ບໍ່ເກີນ 75%.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້; ປະທານກອງປະຊຸມ ຈຶ່ງໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງ ດ້ວຍມະຕິສະເພາະ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,722,590** ສຽງ, ທຽບເທົ່າກັບ **3/3** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 91.96381% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- **ບໍ່ເຫັນດີ:** ຈຳນວນ **500** ສຽງ, ທຽບເທົ່າກັບ **0/3** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ **0.00003%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ວາລະທີ 08: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບຂອງ ທຄຕລ**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ລາຍງານກ່ຽວກັບຈຳນວນຮຸ້ນໃໝ່ທີ່ເພີ່ມຂຶ້ນເປັນ 506,255,500 ຮຸ້ນ. ດ້ວຍເຫດນີ້, ທຄຕລ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງເນື້ອໃນ ຈຳນວນ **07 ມາດຕາ**ຂອງກົດລະບຽບຂອງ ທຄຕລ ທີ່ຕິດພັນກັບທຶນຈົດທະບຽນ, ຈຳນວນຮຸ້ນ, , ສັດສ່ວນການອະນຸຍາດໃຫ້ຜູ້ລົງທຶນຖືຄອງຮຸ້ນ, ການແຕ່ງຕັ້ງສະມາຊິກສະພາບໍລິຫານ ແລະ ອື່ນໆ ເພື່ອໃຫ້ສອດຄ່ອງກັບການປັບປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ນິຕິກຳທີ່ກ່ຽວຂ້ອງ ເນື້ອໃນທີ່ໄດ້ຮັບປຸງປະກອບມີ:

- ມາດຕາ 9 (ປັບປຸງ) ທຶນຈົດທະບຽນ
- ມາດຕາ 11 (ປັບປຸງ) ຈຳນວນຮຸ້ນຂອງ ທຄຕລ
- ມາດຕາ 15 (ປັບປຸງ) ສິດຂອງຜູ້ຖືຮຸ້ນ
- ມາດຕາ 19 (ປັບປຸງ) ກອງປະຊຸມຜູ້ຖືຮຸ້ນ
- ມາດຕາ 27 (ປັບປຸງ) ການແຕ່ງຕັ້ງ ແລະ ທະບຽນຂໍ້ມູນຂອງສະມາຊິກສະພາບໍລິຫານ
- ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ຂອງສະພາບໍລິຫານ
- ມາດຕາ 41 (ປັບປຸງ) ຜູ້ອຳນວຍການ

ການປັບປຸງກົດລະບຽບດັ່ງກ່າວແມ່ນປະຕິບັດຕາມ ກົດໝາຍ, ຂໍ້ຕົກລົງ ແລະ ນິຕິກຳຕ່າງໆ ທີ່ຜູ້ຄຸ້ມຄອງທາງພາກລັດກຳນົດ ເພື່ອຮັບປະກັນການເຄື່ອນໄຫວຂອງ ທຄຕລ ຖືກຕ້ອງ ແລະ ສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

- **ທ່ານ Cao Wei**: ຕິດພັນການປັບປຸງກົດລະບຽບຂອງ ທຄຕລ ສະບັບປັບປຸງປີ 2026 ສັງເກດເຫັນວ່າ ມີການຈຳກັດສິດຂອງຜູ້ຖືຮຸ້ນລາຍຍ່ອຍ ໃນການສະເໜີເປົ້າໝາຍເຂົ້າໃນສະພາບໍລິຫານ ເຊິ່ງອາດຈະບໍ່ສອດຄ່ອງກັບຫຼັກການຄຸ້ມຄອງການບໍລິຫານສາກົນ (Corporate Governance) ເປັນຫຍັງຈຶ່ງມີການຈຳກັດສິດຂອງຜູ້ຖືຮຸ້ນລາຍຍ່ອຍ ເຊິ່ງການດຳເນີນທຸລະກິດໃນປັດຈຸບັນກໍຍັງມີຄວາມເຂັ້ມແຂງຢູ່?
- **ທ່ານ ໄກອັນ ກາດາອານິດ** : ອີງໃສ່ການພິຈະລະນາປັບປຸງກົດລະບຽບຂອງ ທຄຕລ ສະບັບປັບປຸງ ປີ 2026 ຕາມເອກະສານຄັດຕິດ 06 ເຫັນວ່າ ການນຳໃຊ້ຄຳສັບຍັງບໍ່ມີຄວາມຊັດເຈນເທົ່າທີ່ຄວນທັງໃນສະບັບພາສາລາວ ແລະ ພາສາອັງກິດ ເຊິ່ງອາດຈະແຈ້ງໃນທີ່ປະຊຸມຕື່ມວ່າ ເປັນເນື້ອໃນກົດລະບຽບທີ່ສະເໜີປັບປຸງ ແລະ ກຳລັງຈະມາຮັບຮອງໃນກອງປະຊຸມຜູ້ຖືຮຸ້ນໃນມື້ນີ້ ເຊິ່ງຍັງບໍ່ແມ່ນເນື້ອໃນທີ່ປັບປຸງແລ້ວ. ສະນັ້ນ, ວາລະນີ້ ຈຳເປັນຕ້ອງໄດ້ຖືກຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນກ່ອນ ຈຶ່ງສາມາດລະບຸໄດ້ວ່າເປັນເນື້ອໃນກົດລະບຽບທີ່ໄດ້ປັບປຸງແລ້ວ. ທັງນີ້, ກໍ່ເພື່ອໃຫ້ເອກະສານມີຄວາມຖືກຕ້ອງ ແລະ ສອດຄ່ອງກັບວາລະກອງປະຊຸມຢ່າງແທ້ຈິງ.

- **ທ່ານ ສອນນາລິນ ແສງມະນີ**, ຫົວໜ້າກອງເລຂາກອງປະຊຸມ: ໄດ້ລາຍງານວ່າ ① ຕໍ່ກັບຄຳຖາມທີ່ຍົກຂຶ້ນໂດຍ **Mr. Cao Wei** ກ່ຽວກັບການປັບປຸງກົດລະບຽບຂອງ ທຄຕລ ສະບັບປັບປຸງປີ 2026 ແມ່ນໄດ້ອີງໃສ່

ເງື່ອນໄຂຕາມຫຼັກການສາກົນ ກໍ່ຄືສະມາຊິກສະພາບໍລິຫານຖືກແຕ່ງຕັ້ງ ໂດຍກອງປະຊຸມຜູ້ຖືຮຸ້ນ ບົນພື້ນຖານການຄັດເລືອກເປົ້າໝາຍ ແລະ ຖືກແຕ່ງຕັ້ງຈາກລັດຖະບານ ໂດຍສະເພາະລັດວິສາຫະກິດທີ່ລັດຖະບານຖືຮຸ້ນເປັນສ່ວນໃຫຍ່, ເຊິ່ງກໍອາດເບິ່ງວ່າເປັນການຈຳກັດສິດຜູ້ຖືຮຸ້ນລາຍຍ່ອຍໄດ້; ແຕ່ທັງນີ້, ການປັບປຸງກົດລະບຽບຂອງ ທຄຕລ ແມ່ນໄດ້ອີງໃສ່ນິຕິກຳຈາກຜູ້ຄຸ້ມຄອງ (ຄຄຊ) ໂດຍອີງຕາມຂໍ້ຕົກລົງ ການກຳນົດອັດຕາສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນພາຍໃນ ແລະ ຕ່າງປະເທດ ໃນທະນາຄານທຸລະກິດທີ່ມີລັດຖະບານຖືຮຸ້ນເປັນສ່ວນໃຫຍ່ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 02/ຄຄຊ, ລົງວັນທີ 16/03/2026. ດ້ວຍເຫດນີ້, ໃນນາມ ທຄຕລ ເປັນບໍລິສັດຈົດທະບຽນຈຳເປັນຕ້ອງໄດ້ປະຕິບັດຕາມກົດລະບຽບຂອງຜູ້ຄຸ້ມຄອງກຳນົດໄວ້ ເຊິ່ງຈຳເປັນຕ້ອງໄດ້ປັບປຸງບາງມາດຕາຂອງກົດລະບຽບ ທຄຕລ ໃຫ້ສອດຄ່ອງກັບຂໍ້ຕົກລົງດັ່ງກ່າວ ແລະ ອີງຕາມຂໍ້ຕົກລົງສະບັບນີ້ ຜູ້ຖືຮຸ້ນ ທີ່ເປັນລາຍບຸກຄົນ ສາມາດຖືຮຸ້ນ ທຄຕລ ບໍ່ເກີນ 1% ຂອງຮຸ້ນທັງໝົດ ແລະ ນິຕິບຸກຄົນ ຖືຮຸ້ນໄດ້ບໍ່ເກີນ 1.5% ຂອງຮຸ້ນທັງໝົດ; ② ສຳລັບຂໍ້ສັງເກດ ຂອງ **ທ່ານ ໄກອັນ ກາດາອານິດ** ແມ່ນເປັນຍ້ອນການນຳໃຊ້ຄຳສັບທີ່ບໍ່ທັນຊັດເຈນ. ຕົວຢ່າງ: ຄຳວ່າລະບຽບສະບັບເກົ່າ ແມ່ນໝາຍເຖິງສະບັບທີ່ຍັງ ມີຜົນສັກສິດນຳໃຊ້ໄດ້ໃນປັດຈຸບັນ ຈົນກວ່າລະບຽບສະບັບປັບປຸງໃໝ່ຈະໄດ້ຖືກຮັບຮອງໃນກອງປະຊຸມຜູ້ຖືຮຸ້ນ. ໃນຕໍ່ໜ້າ, ແມ່ນຈະໄດ້ປັບປຸງການນຳໃຊ້ຄຳສັບໃຫ້ມີຄວາມຊັດເຈນຂຶ້ນຕື່ມ.

- **ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ໄດ້ຊີ້ແຈງວ່າ ① ອີງໃສ່ການປະກອບຄຳເຫັນ ແລະ ຂໍ້ສັງເກດຂອງຜູ້ຖືຮຸ້ນ ແມ່ນເປັນສິ່ງທີ່ດີຕໍ່ກັບ ທຄຕລ ເຊິ່ງການນຳໃຊ້ຄຳສັບ ສະບັບເກົ່າ ຫຼື ສະບັບປັດຈຸບັນໃນກົດລະບຽບ ແມ່ນຍັງຖືວ່າມີຜົນສັກສິດໃນການນຳໃຊ້ໄດ້ ກໍລະນີສະບັບປັບປຸງໃໝ່ ຍັງບໍ່ທັນໄດ້ຖືກຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ; ② ຕໍ່ກັບຄຳຖາມ ກ່ຽວກັບ ການຈຳກັດສິດຂອງຜູ້ຖືຮຸ້ນ ແມ່ນມີຄວາມເຫັນດີເປັນເອກະພາບໃນບາງສ່ວນ ແຕ່ ຫຼັກການຄຸ້ມຄອງບໍລິຫານສາກົນແລ້ວ ແມ່ນເປັນຫຼັກການອັນລວມໃນການຈັດຕັ້ງປະຕິບັດໃນທົ່ວໂລກ. ສຳລັບກົນໄກຕະຫຼາດທຶນພາຍໃນ ສປປ ລາວ ກົດລະບຽບທີ່ນຳໃຊ້ ແມ່ນຕ້ອງໄດ້ມີຄວາມສອດຄ່ອງຕາມນິຕິກຳຂອງຜູ້ຄຸ້ມຄອງພາຍໃນແຕ່ລະໄລຍະ. ດ້ວຍເຫດນີ້, ທຄຕລ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງກົດລະບຽບໃໝ່ຕາມນິຕິກຳຂອງຜູ້ຄຸ້ມຄອງພາຍໃນ ເຊິ່ງບັນຫາດັ່ງກ່າວ ແມ່ນບໍ່ໄດ້ເກີດຂຶ້ນສະເພາະແຕ່ພາຍໃນ ສປປ ລາວ ແຕ່ຍັງເກີດຂຶ້ນນຳຫຼາຍປະເທດໃນທົ່ວໂລກເຊັ່ນດຽວກັນ.

ເມື່ອບໍ່ມີຄຳເຫັນໃດໆຕື່ມແລ້ວ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງໄດ້ມີມະຕິຮັບຮອງດ້ວຍມະຕິສະເພາະ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,722,590** ສຽງ, ທຽບເທົ່າກັບ **3/3** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ **91.96381%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- **ບໍ່ເຫັນດີ:** ຈຳນວນ **500** ສຽງ, ທຽບເທົ່າກັບ **0/3** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ **0.00003%** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ວາລະທີ 09: ພິຈາລະນາ ແລະ ຮັບຮອງການປັບປຸງດັດສະນີເງິນເດືອນພື້ນຖານສຳລັບພະນັກງານ ທຄຕລ.**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ອີງຕາມການປັບປຸງມູນຄ່າດັດສະນີເງິນເດືອນພື້ນຖານຂອງ ທະນາຄານແຫ່ງ ສປປ ລາວ ຕາມຂໍ້ຕົກລົງເລກທີ 307/ທຫລ ລົງວັນທີ 09 ເມສາ 2026 ກ່ຽວກັບການປັບປຸງດັດສະນີເງິນເດືອນພື້ນຖານຂອງພະນັກງານທະນາຄານລັດ ໂດຍໄດ້ເພີ່ມຈາກ 4,560 ກີບຕໍ່ດັດ

ສະນີ ຂຶ້ນເປັນ 8,000 ກີບຕໍ່ດັດສະນີ. ເພື່ອໃຫ້ສອດຄ່ອງກັບນະໂຍບາຍດັ່ງກ່າວ, ທຄຕລ ຈຶ່ງໄດ້ດຳເນີນການທົບທວນ ແລະ ກໍເຫັນດີນຳສະເໜີປັບປຸງມູນຄ່າດັດສະນີເງິນເດືອນພື້ນຖານ ສຳລັບພະນັກງານ ທຄຕລ ໂດຍລວມທັງພະນັກງານສົມບູນ ແລະ ພະນັກງານສັນຍາຈ້າງ ຂອງ ທຄຕລ ເພື່ອໃຫ້ສອດຄ່ອງກັບຄ່າຄອງຊີບ ແລະ ສະພາບຕົວຈິງໃນປະຈຸບັນ.

ການປັບປຸງຕົວເລກດັດສະນີເງິນເດືອນດັ່ງກ່າວ ແມ່ນບໍ່ໄດ້ສົ່ງຜົນກະທົບ ຕໍ່ແຜນທຸລະກິດປະຈຳປີ 2026 ຂອງ ທຄຕລ ແຕ່ຢ່າງໃດ, ເນື່ອງຈາກ ຄະນະຜູ້ບໍລິຫານ ທຄຕລ ໄດ້ມີການທົບທວນ ຜົນກະທົບຕໍ່ທຸລະກິດໃນດ້ານຕ່າງໆຢ່າງຮອບດ້ານ, ຜ່ານການປະເມີນຄວາມອາດສາມາດໃນການສ້າງລາຍຮັບ ຂອງ ທຄຕລ ໃນປະຈຸບັນ ແມ່ນສາມາດຮອງຮັບລາຍຈ່າຍໃນສ່ວນທີ່ຈະເພີ່ມຂຶ້ນຈາກການປັບປຸງດັດສະນີເງິນເດືອນໃນຄັ້ງນີ້ ເຊິ່ງຕົວເລກດັ່ງກ່າວໄດ້ປະເມີນລວມຢູ່ໃນແຜນທຸລະກິດ ປະຈຳປີ 2026.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

❖ **ທ່ານ Souvanrith Im**: ພາຍຫຼັງການປັບປຸງດັດສະນີເງິນເດືອນໃໝ່ ແລະ ໄດ້ຖືກຮັບຮອງແລ້ວ ແມ່ນຈະມີຜົນສັກສິດໃນການຈັດຕັ້ງປະຕິບັດໄດ້ເມື່ອໃດ ຫຼື ເລີ່ມປະຕິບັດເດືອນ 05/2026 ເລີຍບໍ່?

➢ **ທ່ານ ນ.ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ໄດ້ຊີ້ແຈງວ່າ ການຈັດຕັ້ງປະຕິບັດດັດສະນີເງິນເດືອນໃໝ່ ຖ້າອີງໃສ່ນິຕິກຳຈາກ ທຫລ ແມ່ນໃຫ້ເລີ່ມປະຕິບັດນັບແຕ່ເດືອນ 01/2026 ເປັນຕົ້ນໄປ ແຕ່ສຳລັບ ທຄຕລ ຖ້າບໍ່ໄດ້ຮັບການຮັບຮອງໃນກອງປະຊຸມຜູ້ຖືຮຸ້ນ ແມ່ນຈະບໍ່ສາມາດຈັດຕັ້ງປະຕິບັດໄດ້. ສະນັ້ນ, ຈຶ່ງສະເໜີໃຫ້ຜູ້ຖືຮຸ້ນພິຈະລະນາຮັບຮອງ ແລະ ຖ້າວ່າໄດ້ຮັບການຮັບຮອງແລ້ວ ແມ່ນຈະໄດ້ມີການໄລ່ຄືນຍ້ອນຫຼັງໃຫ້ພະນັກງານເພື່ອໃຫ້ສອດຄ່ອງຕາມນິຕິກຳ.

ເມື່ອບໍ່ມີຄຳເຫັນໃດໆຕື່ມແລ້ວ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ລົງຄະແນນສຽງເພື່ອຮັບຮອງເອົາວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ **1,420,723,090** ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ **0** ສຽງ, ເທົ່າກັບ **0%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ປະທານກອງປະຊຸມ ໄດ້ແຈ້ງຕໍ່ທີ່ປະຊຸມວ່າ ກອງປະຊຸມໄດ້ດຳເນີນທຸກວາລະຢ່າງຄົບຖ້ວນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ ຫຼື ຄຳເຫັນຕໍ່ບັນຫາອື່ນໆ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃດໆ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ 17:00 ໂມງ ຂອງວັນດຽວກັນ.

| **ປະທານກອງປະຊຸມ** | **ຜູ້ບັນທຶກ** |
|---|---|
| **ທ່ານ ນ. ບຸນຕາ ດາຣາວົງ** | **ທ່ານ ສຸວັນນີ ແສງມະນີ** |